## ກະຊວງກະສິກຳ ແລະ ປ່າໄມ້

ກອງທຶນຫລຸດຜ່ອນຄວາມທຸກຍາກ III - ໄລຍະທຶນເພີ່ມທຶນ

ເງິນກູ້ເລກທີ: IDA-AF-6506, ລະຫັດໂຄງການ. P168620

## ປະກາດຮັບສະໝັກພະນັກງານຄືນໃໝ່ ຄັ້ງທີ 3 - Request for Expression of Interest (REOI)

ຕຳແໜ່ງງານ ພະນັກງານຂັ້ນບ້ານ (ພະນັກງານຮາກຖານ) ລົງເຮັດວຽກຢູ່ຂັ້ນບ້ານ
ດ້ານວຽກປັບປຸງຊີວິດການເປັນຢູ່

ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ເພື່ອຈັດຕັ້ງປະຕິບັດໂຄງການກອງທຶນຫລຸດຜ່ອນຄວາມທຸກຍາກ III - ໄລຍະທຶນເພີ່ມເຕີມ ແລະ ມີຈຸດປະສົງທີ່ຈະນຳໃຊ້ທຶນສ່ວນໜຶ່ງ ເຂົ້າໃນການວ່າຈ້າງພະນັກງານຕຳແໜ່ງ ພະນັກງານຂັ້ນບ້ານ (ກໍ່ສ້າງຮາກຖານ) ວຽກປັບປຸງຊີວິດການເປັນຢູ່ ແລະ ວຽກໂພສະນາການ. ການຫັນເອົານັກສຶກສາວິຊາຊີບຈົບໃໝ່ ລົງເຮັດວຽກຮາກຖານ ດ້ານປັບປຸງຊີວິດການເປັນຢູ່ ແກ້ໄຂບັນຫາໂພຊະນາການ ແລະ ຄວາມທຸກຍາກ ໃນໄລຍະແຕ່ປີ ແມ່ນເພື່ອແກ້ໄຂຊີວິດການເປັນຢູ່ ແລະ ສົ່ງເສີມໂພຊະນາການ ໃຫ້ແກ່ຊຸມຊົນ. ຈຸດປະສົງຕົ້ນຕໍໜ້າທີ່ຮັບຜິດຊອບ ຂອງພະນັກງານຂັ້ນບ້ານ (ຮາກຖານ) ສຳລັບນັກສຶກສາຈົບໃໝ່ ມີໜ້າທີຮັບຜິດຊອບ ໃຫ້ການສະໜັບສະໜູນບ້ານເປົ້າໝາຍຂອງໂຄງການທີ່ຖືກມອບໝາຍໃຫຮັບຜິດຊອບ ເພື່ອຈັດຕັ້ງປະຕິບັດບັນດາກິດຈະກຳຕ່າງໆທີ່ໄດ້ກຳນົດໄວ້ຂອງໂຄງການ ລວມທັງການລົງຕິດຕາມ ແລະ ໃຫ້ຄຳແນະນຳດ້ານວິຊາການ ແລະ ໃຫ້ການຊ່ວຍເຫລືອຊາວບ້ານ, ການນຳໃຊ້ສື່ຊ່ວຍໃນການຮຽນຮູ້ຂອງຊຸມຊົນດ້ວຍກັນ, ການອອກແບບ ແລະ ຈັດຕັ້ງປະຕິບັດບັນດາກິດຈະກຳດ້ານຕ່າງໆ ລວມທັງການລົງຕິດຕາມຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເພື່ອເຮັດໃຫ້ຊຸມຊົນສາມາດບັນລຸໄດ້ຈຸດປະສົງຂອງໂຄງການ.

ໂຄງການກອງທຶນຫລຸດຜ່ອນຄວາມທຸກຍາກ ປະຈຳເມືອງ ຄຳ ຂໍເຊີນບັນດານັກສຶກສາຈົບໃໝ່ ຜູ້ທີ່ສົນໃຈ ທີ່ມີເງື່ອນໄຂຖືກຕ້ອງຕາມທີ່ໄດ້ກຳນົດໄວ້ຂ້າງລຸ່ມ ຍື່ນເອກະສານສະໝັກ ພ້ອມເອກະສານອ້າງອີງຕ່າງໆທີ່ກ່ຽວຂ້ອງ ລວມທັງຊີວະປະຫວັດ ແລະ ໃບປະກາດຊະນິຍະບັດ ເພື່ອເປັນບ່ອນອ້າງອີງໃນການຄັດເລືອກ.

ຂໍ້ກຳນົດເງື່ອນໄຂ ຂອງຜູ້ສະໝັກ ຕຳແໜ່ງ ພະນັກງານຂັ້ນບ້ານ (ພະນັກງານຮາກຖານ) ສຳລັບນັກສຶກສາຈົບໃໝ່ ປະກອບມີ ດັ່ງນີ້:

1. <u>ຕຳແໜ່ງ ພະນັກງານຂັ້ນບ້ານ (ພະນັກງານຮາກຖານ) ດ້ານວຽກງານປັບປຸງຊີວິດການເປັນຢູ່ ສຳລັບນັກສຶກສາຈົບໃໝ່ (ຈຳນວນ 1 ຕຳແໜ່ງ)</u>

   - ເປັນນັກສຶກສາທີ່ຮຽນຈົບໃໝ່ພາຍໃນໄລຍະ 3 ປີຜ່ານມາ ແລະ ມີໃບປະກາດຊະນິຍະບັດຊັ້ນປຣິນຍາຕີ;
   - ມີໃບຢັ້ງຢືນອານຸປຣິນຍາ ດ້ານ: ກະສິກຳ, ລ້ຽງສັດ ແລະ ປ່າໄມ້, ພັດທະນາຊົນນະບົດ ແລະ ການພັດທະນາດ້ານສັງຄົມ, ເສດຖະສາດຊົນນະບົດ, ແລະ ການຄົ້ນຄວ້າກ່ຽວກັບການພັດທະນາ;
   - ມີຄວາມຮູ້ ກ່ຽວກັບວຽກງານປັບປຸງຊີວິດການເປັນຢູ່, ວຽກງານໂພຊະນາການ, ການສົ່ງເສີມບົດບາດຍິງ-ຊາຍ ແລະ ການສ້າງຕັ້ງກຸ່ມດ້ານສັງຄົມ (ຕົວຢ່າງ: ກຸ່ມທ້ອນ/ຝາກເງິນ, ກຸ່ມຫັດຖະກຳ ແລະ ກຸ່ມສ້າງລາຍຮັບ ໃຫ້ຄົວເຮືອນ);
   - ມີທັກສະ ການນຳໃຊ້ຄອມພິວເຕີ (MS-Word, Excel) ແລະ ສື່ອອນລາຍຕ່າງໆ;
   - ເປັນຄົນທີ່ຢູ່ບ້ານທີ່ຕົນຈະຮັບຜິດຊອບ ແລະ ສາມາດເດີນທາງລົງເຮັດວຽກພາກສະໜາມໃນເຂດຫ່າງໄກສອກຫລີກ ແລະ ສາມາດພັກເຊົ່າຢູ່ໃນບ້ານປະຊາຊົນໄດ້ ທີ່ຕົນເອງປະຈຳການ.
   - ມີຄວາມຮູ້ ແລະ ສາມາດປາກພາສາຊົນເຜົ່າໃດໜຶ່ງໄດ້ ຈະເປັນການດີ (ພາສາມົ້ງ, ກຶມມຸ, ອາຄາ);
   - ສາມາດຂີ່ລົດຈັກ ແລະ ມີໃບຂັບຂີ່;
   - ມີສຸຂະພາບແຂງແຮງ ແລະ ສາມາດປະຕິບັດວຽກໄດ້ໃນຕະຫລອດອາຍຸຂອງສັນຍາ.

CS Scanned with CamScanner

ການຄັດເລືອກ ແມ່ນດຳເນີນພາຍໃຕ້ຮູບແບບວ່າຈ້າງບຸກຄົນ ໂດຍອີງຕາມຂັ້ນຕອນທີ່ໄດ້ກຳນົດໄວ້ ແລະ ຂໍ້ກຳນົດທີ່ໄດ້ລະບຸໃນວັກ 3.14 ເຖິງ 3.17 ຂອງລະບຽບການຈັດຊື້ ຂອງທະນາຄານໂລກ ສຳລັບຜູ້ກູ້ຢືມ IPF, ລົງວັນທີກໍລະກົດ 2016, ປັບປຸງເດືອນ ພະຈິກ 2017 ແລະ ເດືອນ ສິງຫາ 2018, ເຊິ່ງສາມາດຊອກເຫັນໄດ້ ທີ່ເວບໄຊທ໌: www.worldbank.org/procure.

ຂໍ້ມູນເພີ່ມເຕີມລວມທັງຂໍ້ກຳນົດເງື່ອນໄຂການອ້າງອີງຕ່າງໆ ສາມາດພິວພັນເອົາໄດ້ ຕາມທີ່ຢູ່ຂ້າງລຸ່ມນີ້ ໃນເວລາເຮັດວຽກ ນັບແຕ່ເວລາ 08:00 ໂມງ ຫາ 16:00 ໂມງ, ແຕ່ວັນ ຈັນ ເຖິງ ວັນ ສຸກ, ຫລື ເຂົ້າເບິ່ງໃນເວັບໄຊ້ຂອງໂຄງການທີ່: http://prflaos.org/vacancy. ຫລື ພົວພັນ ຫ້ອງການ ທລຍ ສູນກາງ ໂທ: 021-261479-80 ຕໍ່ 105

ເອກະສານຍື່ນສະໝັກ ຕ້ອງສົ່ງເປັນລາຍລັກອັກສອນ ເຖິງທີ່ຢູ່ຂ້າງລຸ່ມ ດ້ວຍຕົນເອງ ບໍ່ໃຫ້ກາຍເວລາ 16:00 ໂມງ ຂອງວັນທີ 6/2/2023 ທີ່ຢູ່ຫ້ອງການ ທລຍ ເມືອງລຸ່ມນີ້:

ກອງທຶນຫລຸດຜ່ອນຄວາມທຸກຍາກ ເມືອງ: ຄຳ
ຕັ້ງຢູ່: ບ້ານ ຈອມທອງ, ເມືອງ ຄຳ, ແຂວງ: ຊຽງຂວາງ
ໂທ: 061217049, 02029996959, 02055551991
Email: weokhammountha@gmail, khanxay5555@gmail.com

CS Scanned with CamScanner